## ການສະໜັບສະໜູນ ການສ້າງຕັ້ງ ກອບກົດໝາຍທີ່ທັນກັບສະພາບການ ສໍາລັບ ການຄຸ້ມຄອງ PIP

### ຄວາມເປັນມາ

ກອບກົດໝາຍ ໃນປັດຈຸບັນ ກ່ຽວກັບ ການຄຸ້ມຄອງ PIP ແມ່ນ ດໍາລັດ ເລກທີ 58/ນຍ, ເດືອນ 6 ປີ 2002. ໃນເວລາ ການປະກາດນໍາໃຊ້ດໍາລັດ, ບໍ່ມີວິທີການຄຸ້ມຄອງ PIP ສະເພາະໃດໜຶ່ງໄດ້ຖືກສ້າງຂຶ້ນ, ແລະ ການຈັດແບ່ງໜ້າທີ່ຄວາມຮັບຜິດຊອບ ການຄຸ້ມຄອງ PIP ຍັງບໍ່ຈະແຈ້ງ. ຍ້ອນວ່າ ດໍາລັດ ເລກທີ 58 ບໍ່ທັນໄດ້ປັບປຸງເທື່ອ, ກອບກົດໝາຍສໍາລັບ ການຄຸ້ມຄອງ PIP ຈຶ່ງຍັງຄົງບໍ່ທັນຈະແຈ້ງ. ປັດຈຸບັນ ລັດຖະບານ ສປປ ລາວ ໄດ້ເຫັນວ່າ ມີຄວາມຈໍາເປັນ ປັບປຸງ ກອບກົດໝາຍ ໂດຍການຍົກ ດໍາລັດຂຶ້ນ ເປັນກົດໝາຍ ແລະ ລວມເອົາວິທີການ ອັນໃໝ່ທີ່ພັດທະນາຂຶ້ນໂດຍ ພີແຄັບ ໃນກອບດັ່ງກ່າວ. ພາຍໃຕ້ຄໍາສັ່ງແນະນໍາ ຈາກສະພາແຫ່ງຊາດ, MPI ແມ່ນກໍາລັງດໍາເນີນການ ສ້າງ ກົດໝາຍ ການລົງທຶນແຫ່ງລັດ ສໍາລັບການຮັບຮອງ.

### ການດໍາເນີນ ການຂອງໂຄງການ

ພີແຄັບ2 ຈະຊ່ວຍສ້າງ ກົດໝາຍການລົງທຶນ ແຫ່ງລັດ ໂດຍການໃຫ້ຄໍາແນະນໍາ ທາງດ້ານວິຊາການ. ໂຄງການ ຈະຮັບປະກັນວ່າ ກົດໝາຍ ໄດ້ລວມເອົາ ບັນດາວິທີການຄຸ້ມຄອງ PIP ອັນໃໝ່ ທີ່ໄດ້ ສະເໜີຂຶ້ນໃນປີມໍ່ໆນີ້. ເຊັ່ນດຽວກັນ ໂຄງການຈະຊ່ວຍສ້າງ ດໍາລັດ ແລະ ລະບຽບການ ໃນການຈັດຕັ້ງປະຕິບັດທີ່ກົດໝາຍ ມີຄວາມຕ້ອງການ, ແລະ ດໍາເນີນການ ເພື່ອ ຮັບປະກັນວ່າ ກົດໝາຍ ແລະ ກອບການຈັດຕັ້ງປະຕິບັດ ຂອງມັນ ເຮັດໜ້າທີ່ໄດ້ຢ່າງເໝາະສົມ.

### ກິດຈະກໍາຕ່າງໆ

- ສະໜັບສະໜູນ ການສ້າງ ກົດໝາຍ ການລົງທຶນ ແຫ່ງລັດ
- ສະໜັບສະໜູນ ການສ້າງ ດໍາລັດ ແລະ ລະບຽບການ ການຈັດຕັ້ງປະຕິບັດ
- ສະໜັບສະໜູນ ການຝຶກອົບຮົມ ແລະ ກອງປະຊຸມ ເຜີຍແຜ່ ການຈັດຕັ້ງປະຕິບັດ ກົດໝາຍ, ດໍາລັດ ແລະ ລະບຽບການ.